**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ອະນຸກຳມະການຮັບຜິດຊອບຈັດການແຂ່ງຂັນ ແລະ
ເວທີສຳລັບທຸລະກິດສະຕາດອັບ

ເລກທີ 011 /ກຕສ.໑໒໒

ນະຄອນຫຼວງວຽງຈັນ, ວັນທີ 13.ກຸມພາ 2025

## ແຈ້ງການ

**ຮຽນ:** ບັນດາການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ນັກຮຽນນັກສຶກສາ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຂໍເຊີນຊວນ ສິ່ງຜະລິດຕະພັນນະວັດຕະກຳໄອຊີທີ ເຂົ້າຮ່ວມການແຂ່ງຂັນ Lao Innovation Digital Award 2025.

ກະຊວງເຕັກໂນໂລຊີ ແລະ ການສື່ສານ, ໃນນາມຂອງ ອະນຸກຳມະການຮັບຜິດຊອບຈັດການແຂ່ງຂັນ ແລະ ເວທີສຳລັບທຸລະກິດສະຕາດອັບ ຂໍຖືເປັນກຽດແຈ້ງ ແລະ ເຊີນຊວນມາຍັງ ບັນດາການຈັດຕັ້ງ, ບຸກຄົນ, ນິຕິບຸກຄົນ ແລະ ນັກຮຽນນັກສຶກສາ ໃນຂອບເຂດທົ່ວປະເທດ ທີ່ມີຜະລິດຕະພັນໄອຊີທີດີຈີຕ໋ອນ, ນະວັດຕະກຳດ້ານເຕັກໂນໂລຊີ ສົ່ງຜົນງານຂອງຕົນ ເພື່ອເຂົ້າຮ່ວມການແຂ່ງຂັນ Lao Innovation Digital Award ປະຈຳປີ 2025. ຊຶ່ງລາຍລະອຽດເງື່ອນໄຂ ແລະ ວິທີການສະໝັກມີດັ່ງລຸ່ມນີ້:

1. ເງື່ອນໄຂຂອງຜູ້ເຂົ້າຮ່ວມແຂ່ງຂັນ: ຕ້ອງເປັນບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ, ນັກຄົ້ນຄວ້າ ແລະ ນັກຮຽນນັກສຶກສາ ພາຍໃນ ສປປ ລາວ;
2. ວັນເວລາ ເປີດ-ປິດ ການສະໝັກ: ນັບຕັ້ງແຕ່ມື້ປະກາດນີ້ເປັນຕົ້ນໄປ ຈົນເຖິງວັນທີ 11 ມີນາ 2025;
3. ວິທີການສະໝັກ ແລະ ລາຍລະອຽດຕ່າງໆ ທ່ານສາມາດ ເຂົ້າເບິ່ງໄດ້ທີ່ເວັບໄຊ: www.Laoictaward.gov.la ຫຼື ພົວພັນສອບຖາມຂໍ້ມູນເພີ່ມເຕີມ: **Whatsapp**: 020 56395659, 020 29831565, **Facebook:** Lao Innovation Digital Award.Official, **E-Mail:** laodigitalaward@gmail.com

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຂໍເຊີນຊວນເຂົ້າຮ່ວມການແຂ່ງຂັນຕາມເງື່ອນໄຂທີ່ກຳນົດໄວ້.

**ຫົວໜ້າອະນຸກຳມະການຮັບຜິດຊອບຈັດການແຂ່ງຂັນ**
**ແລະ ເວທີສຳລັບທຸລະກິດສະຕາດອັບ**

ສະແກນເບິ່ງຂໍ້ມູນ

ຄຳຫຼ້າ ສຸນນະລັດ